**ເງື່ອນໄຂກຳນົດສຳລັບໂຄງການຊ່ວຍເຫຼືອດ້ານການເງິນ – ປະກັນໄພບໍ່ພຽງພໍ**

ຖ້າສາມາດກຳນົດໄດ້, ເອກະສານຕໍ່ໄປນີ້ຕ້ອງມາພ້ອມກັບໃບຄຳຮ້ອງຂໍການຊ່ວຍເຫຼືອດ້ານການເງິນຂອງ Care New England.

1 ໃບຍື່ນເສຍພາສີພ້ອມເອກະສານສະໜັບສະໜູນສຳລັບປີຫຼ້າສຸດທີ່ໄດ້ຍື່ນ.

2 ບັນທຶກລາຍຮັບ**(ເບິ່ງຄຳອະທິບາຍລະອຽດຢູ່ລຸ່ມນີ້)*
   a. ສົ້ນໃບຈ່າຍເງິນປະຈຸບັນ (ຕ່ຳສຸດ 4 ອາທິດ)
   b. ໜັງສືຮັບຮອງຄວາມພິການ
   c. ໜັງສືຮັບຮອງປະກັນສັງຄົມ (ບໍ່ຈຳເປັນ ຖ້າມີໃບຢັ້ງຢືນເງິນຝາກໂດຍກົງ ແລະ ບັນຊີສຳຮອງທະນາຄານ)
   d. ລາຍໄດ້ຂອງຄົນເຈັບ (ການຍື່ນເສຍພາສີ) ເມື່ອຄົນຜູ້ທີ່ກຳລັງຍື່ນຂໍການຊ່ວຍເຫຼືອເປັນນັກຮຽນ

3 ບັນທຶກຊັບສິນ***(ເບິ່ງຄຳອະທິບາຍລະອຽດຢູ່ລຸ່ມນີ້)*
   a. ບັນຊີສຳຮອງທະນາຄານ ລວມທັງບັນຊີຝາກປະຢັດ, ບັນຊີກະແສລາຍວັນ, ໃບຢັ້ງຢືນການລົງທຶນ, ເງິນປະຈຳປີ, CD's, ບັນຊີຕະຫຼາດເງິນ, ຮຸ້ນ, ພັນທະບັດ, ເງິນບໍານານ ແລະ IRA's
   b. ວົງເງິນສົດຂອງສັນຍາປະກັນຊີວິດ.
   c. ຊັບສິນສ່ວນຕົວ (ນອກເໜືອຈາກທີ່ຢູ່ອາໄສຕົ້ນຕໍ ແລະ ພາຫະນະມີຈັກສຳລັບໃຊ້ສ່ວນຕົວ)

4 ການຊ່ວຍເຫຼືອທາງການແພດ ແລະ/ຫຼື ການອະນຸມັດ/ການປະຕິເສດ HealthSource RI

5 ສຳເນົາໃບຢັ້ງຢືນເສຍຊີວິດ ຖ້າມີ.

6 ຫຼັກຖານຢັ້ງຢືນການເປັນນັກຮຽນ ຖ້າມີ.

7 ໜັງສືສະໜັບສະໜູນ ຖ້າມີ.

8 ລາຍຈ່າຍ ແລະ ໜີ້ສິນ

9 ໃບຢັ້ງຢືນຫຼ້າສຸດສຳລັບສັນຍາຜ່ອນບ້ານ/ການເຊົ່າ, ພາສີຊັບສິນ, ສິ່ງອໍານວຍຄວາມສະດວກ, ການຈ່າຍຄ່າລົດ/ການໃຫ້ເຊົ່າ, ບັດເຄຣດິດ, ເງິນກູ້ເປັນງວດ, ປະກັນໄພລົດ/ບ້ານ, ຄ່າໃຊ້ຈ່າຍທາງການແພດ ແລະ ຄ່າໃຊ້ຈ່າຍອື່ນໆ.

<u>*ບັນທຶກລາຍໄດ້:</u> ລາຍໄດ້ໝາຍເຖິງໃບຮັບເງິນສົດປະຈຳປີທັງໝົດຕົວຈິງ ຫຼື ປະມານໄວ້ກ່ອນຫັກພາສີຈາກເງິນເດືອນ, ຄ່າແຮງງານ, ລາຍໄດ້ຈາກທຸລະກິດສ່ວນຕົວ, ລາຍໄດ້ລ້ຽງລູກ, ລາຍໄດ້ຈາການເຊົ່າ, ເງິນຊົດເຊີຍການຫວ່າງງານ, ປະກັນໄພຄວາມພິການຊົ່ວຄາວ, ເງິນຊ່ວຍລ້ຽງລູກ, ເງິນທີ່ຜົວຮ້າງເມຍໄປ, ເງິນຊົດເຊີຍຜູ້ເຮັດວຽກ, ເງິນສະຫວັດດີການນັກຮົບເກົ່າ, ເງິນຈ່າຍຄ່າປະກັນສັງຄົມ, ເງິນປັນຜົນ ແລະ ລາຍໄດ້ຈາກດອກເບ້ຍ, ຄ່າທຳນຽມ, ເງິນບໍານານເອກະຊົນ ແລະ ຂອງລັດ, ແລະ ການຊ່ວຍເຫຼືອສັງຄົມ. ນອກຈາກນັ້ນແລ້ວລາຍຮັບກໍ່ຍັງລວມມີເງິນສະຫວັດດີການໃນການປະທ້ວງ, ເງິນໄດ້ສຸດທິຈາກການຖືກຫວຍ ແລະ ຊະນະຈາກການພະນັນ ແລະ ການຈ່າຍເງິນປະກັນໄພຄັ້ງດຽວ ຫຼື ເງິນຊົດເຊີຍການບາດເຈັບທີ່ໄດ້ຮັບເປັນປີ ເຊິ່ງໄດ້ຂໍການຊ່ວຍເຫຼືອທາງດ້ານການເງິນສຳລັບການບໍລິການຂອງໂຮງໝໍ.

<u>**ບັນທຶກຊັບສິນ:</u> ຊັບສິນໝາຍເຖິງເງິນສົດ, ຊັບສິນທຽບເທົ່າເງິນສົດ ແລະ ຊັບສິນວັດຖຸອື່ນໆ ທີ່ສາມາດປ່ຽນເປັນເງິນສົດໄດ້, ລວມທັງເງິນສົດທີ່ມີຢູ່ໃນມື, ບັນຊີຝາກປະຢັດ, ບັນຊີກະແສລາຍວັນ, ໃບຢັ້ງຢືນການຝາກເງິນ (CDs), ບັນຊີຕະຫຼາດເງິນ, ຮຸ້ນ (ທົ່ວໄປ ແລະ ເລືອກໄວ້), ພັນທະບັດ, ກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນ, IRAs, 401(k) s, 403(b) s, 457s, ວົງເງິນສົດຢູ່ໃນໜັງສືສັນຍາປະກັນຊີວິດ, ຊັບສິນສ່ວນຕົວ, ພາຫະນະມີເຄື່ອງຈັກທີ່ນອກເໜືອໄປຈາກອັນທີ່ໃຊ້ສ່ວນຕົວ, ບ້ານຫຼັງທີສອງ ແລະ ຊັບສິນໃຫ້ເຊົ່າ. ຍົກເວັ້ນຊັບສິນທີ່ຢູ່ອາໄສຕົ້ນຕໍ ແລະ ພາຫະນະມີຈັກສຳລັບໃຊ້ສ່ວນຕົວ.